ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະການຄ້າ
ກົມການຄ້າພາຍໃນ

1429
ເລກທີ: /ຄພນ
ນະຄອນຫຼວງວຽງຈັນ, ວັນທີ: 22 ທັນວາ 2016

## ແຈ້ງການ

**ເຖິງ**: ພະແນກອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນຫຼວງວຽງຈັນ
**ເລື່ອງ**: ການເຄື່ອນຍ້າຍສິນຄ້າປະເພດໄມ້ ພາຍໃນປະເທດ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມການຄ້າພາຍໃນ ສະບັບເລກທີ 1753/ອຄ, ລົງວັນທີ 19 ກັນຍາ 2016.

ເພື່ອອຳນວຍຄວາມສະດວກ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດ ແລະ ຫຼີກເວັ້ນຜົນກະທົບຕໍ່ການດຳເນີນທຸລະກິດ ໃນການເຄື່ອນຍ້າຍສິນຄ້າພາຍໃນປະເທດ (ເປັນຕົ້ນ: ຜະລິດຕະພັນໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ, ໄມ້ສຳເລັດຮູບ) ໃຫ້ມີຄວາມສະດວກຄ່ອງຕົວ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໃນໄລຍະລໍຖ້າການປັບປຸງນິຕິກຳ ກ່ຽວກັບການເຄື່ອນຍ້າຍສິນຄ້າພາຍໃນປະເທດ ຂອງກະຊວງອຸດສາຫະກຳ ແລະການຄ້າ.

### ກົມການຄ້າພາຍໃນ ຂໍຖືເປັນກຽດແຈ້ງມາຍັງທ່ານ ດັ່ງນີ້:

1. ການເຄື່ອນຍ້າຍສິນຄ້າພາຍໃນປະເທດ ເປັນຕົ້ນ: ຜະລິດຕະພັນໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ, ໄມ້ສຳເລັດຮູບ ໃຫ້ປະກອບມີເອກະສານຕົ້ນຕໍດັ່ງນີ້:
   - ໃບແຈ້ງລາຄາສິນຄ້າຂອງບໍລິສັດ (Invoice)
   - ໃບແຈ້ງລາຍການສິນຄ້າຂອງບໍລິສັດ (Packing List)
   - ໃບ ອ.5 (ຂອງຂະແໜງອຸດສາຫະກຳ ແລະ ການຄ້າ)
   - ໃບຢັ້ງຢືນເຄື່ອນຍ້າຍໄມ້ (ຂອງຂະແໜງກະສິກຳ ແລະ ປ່າໄມ້)
   - ໃບເກັບເງິນອາກອນມູນຄ່າເພີ່ມ ແລະ ຄ່າທຳນຽມຕ່າງໆ (ຂອງຂະແໜງການເງິນ)
2. ຖ້າຫາກຫົວໜ່ວຍທຸລະກິດມີເອກະສານຄົບຖ້ວນຖືກຕ້ອງຕາມ ຂໍ້ 1 ຂອງແຈ້ງການສະບັບນີ້ ແມ່ນສາມາດເຄື່ອນຍ້າຍສິນຄ້າປະເພດໄມ້ ພາຍໃນປະເທດໄດ້ເລີຍ.

ສະນັ້ນ, ຈຶ່ງແຈ້ງມາຍັງທ່ານ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຊາບ ແລະ ພ້ອມກັນປະຕິບັດແຈ້ງການສະບັບນີ້.

ຫົວໜ້າກົມການຄ້າພາຍໃນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ບຸນທຽມ ແກ້ວສົມພາ